



# ຄຳແນະນຳສຳລັບຄອບຄົວກ່ຽວກັບ
# ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນລັດ **Washington**

*Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA)*





Washington State Department of
CHILDREN, YOUTH & FAMILIES



ເມື່ອທ່ານຮູ້ວ່າລູກຂອງທ່ານມີຄວາມຊັກຊ້າ, ທ່ານອາດຈະມີຄວາມຮູ້ສຶກຕ່າງໆນາໆ. ທ່ານອາດຮູ້ສຶກຢ້ານ, ທ່ານອາດບໍ່ເຊື່ອໃນສິ່ງທີ່ເວົ້າ ຫຼື ທ່ານອາດຮູ້ສຶກໃຈຮ້າຍດ້ວຍຊ້ຳ. ຄວາມຮູ້ສຶກເຫຼົ່ານີ້ບໍ່ແມ່ນຄວາມຮູ້ສຶກທີ່ຜິດປົກກະຕິ ແລະ ບໍ່ມີທ່ານລຳພັງພຽງຄົນດຽວ. ພໍ່ແມ່ຄົນອື່ນໆກໍມີປະສົບການ ຫຼື ຄວາມຮູ້ສຶກເຫຼົ່ານີ້ເຊັ່ນກັນ. ມີໂຄງການຕ່າງໆໃນທົ່ວລັດທີ່ຊ່ວຍໃຫ້ທ່ານສາມາດເຊື່ອມຕໍ່ກັບພໍ່ແມ່ຄົນອື່ນໆທີ່ມີຄວາມຮູ້ສຶກ ຫຼື ຄວາມກັງວົນເຫຼົ່ານີ້ເຊັ່ນກັນ. ທ່ານສາມາດໂທຫາບັນດາເບີຊ່ວຍເຫຼືອພໍ່ແມ່ທີ່ລະບຸໄວ້ໃນດ້ານຫຼັງຂອງປຶ້ມຫົວນີ້ສຳລັບຂໍ້ມູນເພີ່ມຕື່ມ ແລະ ຄວາມຊ່ວຍເຫຼືອ.

## ຮຽນ ບັນດາພໍ່ແມ່ຜູ້ປົກຄອງ ທີ່ຮັກແພງ,

ຂ້າພະເຈົ້າຮູ້ວ່າຖ້າທ່ານມີປຶ້ມຄູ່ມືນີ້, ສະແດງວ່າທ່ານອາດຈະມີຄວາມກັງວົນກ່ຽວກັບການພັດທະນາການຂອງລູກຂອງທ່ານ ຫຼື ທ່ານໄດ້ຮັບແຈ້ງບອກວ່າລູກຂອງທ່ານມີການພັດທະນາການຊ້າ.

ຂ້າພະເຈົ້າຈື່ໄດ້ວ່າ ຕົນເອງຮູ້ສຶກອັດອັ້ນຕັນໃຈ ແລະ ສັບສົນຫຼາຍພຽງໃດ ເມື່ອລູກສາວຂອງຕົນ, ຊູຊີ, ກຳລັງເຂົ້າຮັບການກວດການພັດທະນາການຊັກຊ້າຂອງນາງ. ຂ້າພະເຈົ້າບໍ່ເຂົ້າໃຈຫຼາຍຄຳເວົ້າຫຼາຍຄຳທີ່ຜູ້ຊ່ຽວຊານໃຊ້, ແຫ່ງບໍ່ເວົ້າເຖິງວິທີການຮັບການບໍລິການເລີຍ.

ເມື່ອພວກເຮົາໄດ້ຮັບການບໍລິການແລ້ວ, ໂດຍຜ່ານຄູ ແລະ ນັກບຳບັດທີ່ມີປະໂຫຍດຫຼາຍຢ່າງ, ການພັດທະນາການຂອງນາງກໍດີຂຶ້ນຫຼາຍແລ້ວ. ຂ້າພະເຈົ້າຮູ້ສຶກຊາບຊຶ້ງໃຈກັບສິ່ງທີ່ນາງເປັນຢູ່ໃນທຸກມື້ນີ້ ຍ້ອນນາງໄດ້ຮັບການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນຊ່ວງເລີ່ມແລກທີ່ມີຄວາມສຳຄັນເຫຼົ່ານັ້ນ. ນອກຈາກນັ້ນ, ການເຊື່ອມໂຍງກັບພໍ່ແມ່ຄົນອື່ນໆ ແລະ ການແບ່ງປັນຂໍ້ມູນ ແມ່ນມີຄວາມສຳຄັນທີ່ສຸດສຳລັບຄອບຄົວຂອງພວກເຮົາ.

ຂ້າພະເຈົ້າຫວັງວ່າທ່ານຈະນຳໃຊ້ປຶ້ມຄູ່ມືນີ້ເປັນຄຳແນະນຳໃນການໃຊ້ການບໍລິການ ແລະ ການຊ່ວຍເຫຼືອທີ່ຄອບຄົວຂອງທ່ານຕ້ອງການ.

***Cassie,* *ຜູ້ປົກຄອງ***

# ສາລະບານ


ພາກສະເໜີ . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . 2

ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ແມ່ນຫຍັງ? . . . . . . . . . . . . . . . . 3

ຈະເຮັດແນວໃດ ຖ້າຂ້າພະເຈົ້າມີຄຳຖາມກ່ຽວກັບການ
ພັດທະນາການຂອງລູກຂອງຕົນ? . . . . . . . . . . . . . . . . . . . . . . . . . . . . 4

ຜູ້ທີ່ມີສິດໄດ້ຮັບການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນ
Washington ແມ່ນມີໃຜແດ່? . . . . . . . . . . . . . . . . . . . . . . . . . . . . . . . 5

ສິ່ງທີ່ຈະເກີດຂຶ້ນຕໍ່ໄປແມ່ນມີຫຍັງແດ່? . . . . . . . . . . . . . . . . . . . . . . . . . 6

ສິ່ງທີ່ຈະເກີດຂຶ້ນໃນຕອນອາຍຸຄົບ 3 ປີ ແມ່ນມີຫຍັງແດ່? . . . . . . . . . . . . 7

ສິດຂອງຂ້າພະເຈົ້າພາຍໃຕ້ Individuals with Disabilities
Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ,
IDEA) ແມ່ນມີຫຍັງແດ່? (ຄວາມຄຸ້ມຄອງຕາມລະບຽບການ). . . . . . . . 8

ຈະເຮັດແນວໃດ ຖ້າຂ້າພະເຈົ້າບໍ່ເຫັນດີກັບການຕັດສິນໃຈ
ກ່ຽວກັບການບໍລິການຂອງລູກ ຫຼື ຄອບຄົວຂອງຕົນ? . . . . . . . . . . . . . 10

ຂ້າພະເຈົ້າສາມາດໄປຂໍຄວາມຊ່ວຍເຫຼືອ ຫຼື
ຂໍ້ມູນເພີ່ມຕື່ມໄດ້ຢູ່ໃສແດ່? . . . . . . . . . . . . . . . . . . . . . . . . . . . . . . . . . 11

ຂ້າພະເຈົ້າຈະສາມາດເຂົ້າໄປມີສ່ວນຮ່ວມຫຼາຍຂຶ້ນໄດ້ຄືແນວໃດ? . . . 12

ນັ້ນໝາຍຄວາມວ່າແນວໃດ? (ຄຳສັບ) . . . . . . . . . . . . . . . . . . . . . . . . . .13

ຄຳຂອບໃຈ . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . 14




# ພາກສະເໜີ

*"ເມື່ອລູກຊາຍຂອງຂ້າພະເຈົ້າມີອາຍຸໄດ້ຫົກເດືອນ, ລາວຍັງນັ່ງບໍ່ທັນໄດ້ເທື່ອ. ຂ້າພະເຈົ້າຄິດວ່າບາງທີຕົນກຳລັງເຮັດບາງຢ່າງຜິດພາດໄປ. ຂ້າພະເຈົ້າໄດ້ພາລາວໄປຫາໝໍຂອງພວກເຮົາ ເຊິ່ງເປັນຜູ້ທີ່ຊ່ວຍຂ້າພະເຈົ້າໃນການເຊື່ອມໂຍງກັບໂຄງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ. ໃນຂະນະນີ້ ລູກຊາຍຂອງຂ້າພະເຈົ້າກຳລັງໄດ້ຮັບການບໍລິການທີ່ມີປະໂຫຍດສຸດໆເລີຍ. ລາວມີຄວາມຄືບໜ້າທີ່ດີ ແລະ ຂ້າພະເຈົ້າກຳລັງສຶກສາເພີ່ມຕື່ມກ່ຽວກັບສິ່ງທີ່ຕົນຈະສາມາດເຮັດໄດ້. ໃນຕອນນີ້ ຂ້າພະເຈົ້າຮູ້ວ່າ ມັນບໍ່ແມ່ນຍ້ອນຕົນໄດ້ເຮັດຫຍັງຜິດພາດໄປຈຶ່ງເຮັດໃຫ້ ອຽນ ບໍ່ສາມາດເຮັດສິ່ງຕ່າງໆໄດ້ໄວຄືກັນກັບເດັກຄົນອື່ນໆ."*

***Heather, ຜູ້ປົກຄອງ***



**ຈຸດປະສົງຫຼັກຂອງຄຳແນະນຳນີ້** ແມ່ນເພື່ອໃຫ້ພາບລວມກ່ຽວກັບໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT) ຂອງ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ, DCYF) ແຫ່ງລັດ Washington ໃຫ້ແກ່ທ່ານ ແລະ ຄອບຄົວຂອງທ່ານ. ການເຂົ້າຮ່ວມຂອງຄອບຄົວຂອງທ່ານໃນໂຄງການ ESIT ແມ່ນຂຶ້ນກັບທ່ານເລືອກເອງ. ຖ້າພົບເຫັນວ່າລູກຂອງທ່ານມີເງື່ອນໄຂເຂົ້າຮ່ວມໂຄງການ ESIT, ກໍຈະມີການບໍລິການການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃຫ້ແກ່ລູກ ແລະ ຄອບຄົວຂອງທ່ານ ເພື່ອແກ້ໄຂຄວາມຊັກຊ້າໃນການພັດທະນາການຂອງລູກທ່ານ.

ຄຳແນະນຳນີ້ໃຫ້ຂໍ້ມູນທົ່ວໄປ ແລະ ຂໍ້ມູນທີ່ສຳຄັນ ກ່ຽວກັບໂຄງການ ESIT ໃນທົ່ວລັດ, ລວມທັງລາຍການສິດບາງອັນຂອງທ່ານໃນຖານະເປັນຜູ້ປົກຄອງ ໃຫ້ແກ່ທ່ານ. ຄຳອະທິບາຍທີ່ຄົບຖ້ວນ ແລະ ລະອຽດຍິ່ງຂຶ້ນ ກ່ຽວກັບຄວາມຄຸ້ມຄອງຕາມລະບຽບການ/ສິດຂອງຜູ້ປົກຄອງທີ່ມີໃຫ້ທ່ານ ແລະ ຄອບຄົວຂອງທ່ານ ແມ່ນໄດ້ສະໜອງໃຫ້ເປັນເອກະສານແຍກຕ່າງຫາກສະບັບໜຶ່ງ ທີ່ເອີ້ນວ່າ "Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA) ພາກ C ວ່າດ້ວຍ ຄວາມຄຸ້ມຄອງຕາມລະບຽບການ (ສິດຂອງຜູ້ປົກຄອງ)". ໃນຂະນະທີ່ທ່ານອ່ານຄຳແນະນຳນີ້, Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ຂອງທ່ານ ຫຼື ບຸກຄົນໃດໜຶ່ງຈາກໂຄງການ ESIT ຈະສາມາດຕອບຄຳຖາມທຸກປະການທີ່ທ່ານອາດຈະມີກ່ຽວກັບໂຄງການ.

ພວກເຮົາໄດ້ນຳໃຊ້ຄຳສັບທີ່ມັກໃຊ້ທົ່ວໄປກ່ຽວກັບການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຈຳນວນຫຼາຍຄຳສັບ ໃນທົ່ວເອກະສານນີ້. ຖ້າທ່ານມີຄຳຖາມໃດໆກ່ຽວກັບຄຳສັບເຫຼົ່ານັ້ນ ແລະ ຕ້ອງການຄຳນິຍາມ, ໃຫ້ເປີດໄປຍັງໜ້າ 13 ຂອງປຶ້ມຄູ່ມືນີ້ສຳລັບປະມວນຄຳສັບຕ່າງໆ.

## Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT) ແຫ່ງລັດ Washington

ໃນຖານະເປັນພໍ່ແມ່, ທ່ານເປັນບຸກຄົນທີ່ສຳຄັນທີ່ສຸດໃນຊີວິດຂອງລູກຂອງທ່ານ. ເດັກຈະມີການຈະເລີນເຕີບໂຕ ແລະ ປ່ຽນແປງຢ່າງໄວວາໃນລະຊ່ວງສາມປີທຳອິດຂອງພວກເຂົາ. ຄິດກ່ຽວກັບລູກຂອງທ່ານ ແລະ ນຶກເບິ່ງວ່າເດັກກຳລັງຈະເລີນເຕີບໂຕຄືແນວໃດ. ທ່ານຮູ້ຈັກລູກຂອງທ່ານດີທີ່ສຸດ. ສັງເກດເບິ່ງສິ່ງຕ່າງໆ ເຊັ່ນ: ລູກຂອງທ່ານຍິ້ມ, ລຸກນັ່ງ, ຍ່າງ, ເວົ້າ ຫຼື ຖືຈອກ ຄືແນວໃດ ແລະ ເມື່ອໃດ. ສິ່ງທີ່ທ່ານກຳລັງເຫັນແມ່ນສິ່ງທີ່ລູກຂອງທ່ານກຳລັງຈະເລີນເຕີບໂຕຜ່ານຂັ້ນຕອນພັດທະນາການຕ່າງໆທີ່ແຕກຕ່າງກັນໄປ. ເມື່ອເດັກມີພັດທະນາການຊັກຊ້າ, ກໍຈະມີການບໍລິການໃຫ້ໃນທົ່ວລັດ. ໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT) ແຫ່ງລັດ Washington ຈະປະສານຄວາມພະຍາຍາມໃນທົ່ວລັດເພື່ອຊ່ວຍໃຫ້ຄອບຄົວຕ່າງໆໃຫ້ໄດ້ຮັບການບໍລິການເຫຼົ່ານີ້.

# ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ແມ່ນຫຍັງ?

ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ແມ່ນການບໍລິການດ້ານການພັດທະນາການ, ທີ່ສະໜອງໃຫ້ພາຍໃຕ້ການຊີ້ນໍາຂອງສາທາລະນະ ແລະ ໃນສະພາບແວດລ້ອມທາງທຳມະຊາດ. ການບໍລິການນີ້ໄດ້ຮັບການອອກແບບມາເພື່ອຕອບສະໜອງຄວາມຕ້ອງການດ້ານການພັດທະນາການຂອງເດັກທາລົກ ຫຼື ເດັກໃນໄວແອບຍ່າງທີ່ເຂົ້າເງື່ອນໄຂ ແລະ ໄດ້ຮັບການອອກແບບມາເພື່ອຊ່ວຍໃຫ້ພໍ່ແມ່ຜູ້ປົກຄອງສາມາດຊ່ວຍລູກຂອງເຂົາເຈົ້າໃຫ້ມີການພັດທະນາ ແລະ ການຮຽນຮູ້.

ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ (ໃນຊ່ວງປີທຳອິດໃນຊີວິດຂອງເດັກ) ສາມາດສ້າງຄວາມແຕກຕ່າງໄດ້ຢ່າງຫຼວງຫຼາຍ ໂດຍການຊ່ວຍໃຫ້ທ່ານ:

- ຊອກຫາການບໍລິການຕ່າງໆທີ່ທ່ານຕ້ອງການສຳລັບລູກຂອງທ່ານ.
- ເຂົ້າໃຈການຈະເລີນເຕີບໂຕດ້ານການພັດທະນາການຂອງລູກທ່ານ.
- ສະໜັບສະໜູນການຮຽນຮູ້ ແລະ ການພັດທະນາການຂອງລູກທ່ານ ແລະ ເຮັດໃຫ້ມີຄວາມສາມາດເຂົ້າຮ່ວມໃນກິດຈະກໍາບ້ານ ແລະ ຊຸມຊົນຕ່າງໆໄດ້ຢ່າງປະສົບຜົນສຳເລັດ.

## ຈຸດປະສົງຂອງການແຊກແຊງຊ່ວຍເຫຼືອເບື້ອງຕົ້ນແມ່ນຫຍັງ?

ຈຸດປະສົງຂອງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄອບຄົວ ໂດຍການໃຫ້ການປະສານງານ, ການສະໜັບສະໜູນ, ແຫຼ່ງຊັບພະຍາກອນ ແລະ ການບໍລິການຕ່າງໆ ເພື່ອເສີມຂະຫຍາຍການພັດທະນາການຂອງເດັກທີ່ມີການພັດທະນາການຊັກຊ້າ ແລະ ມີຄວາມພິການ ໂດຍຜ່ານໂອກາດໃນການຮຽນຮູ້ຈາກຊີວິດປະຈຳວັນ.

ເພື່ອເຮັດໃຫ້ຄອບຄົວຕ່າງໆສາມາດເບິ່ງແຍງດູແລລູກຂອງເຂົາເຈົ້າ ແລະ ສາມາດເຂົ້າຮ່ວມໃນກິດຈະກໍາຄອບຄົວ ແລະ ຊຸມຊົນຕ່າງໆ, ຄອບຄົວຕ່າງໆຈະຕ້ອງ:

- ຮູ້ເຖິງສິດຂອງເຂົາເຈົ້າ.
- ສື່ສານຄວາມຕ້ອງການຂອງລູກຂອງເຂົາເຈົ້າຢ່າງມີປະສິດທິພາບ.
- ຊ່ວຍລູກຂອງເຂົາເຈົ້າໃນການພັດທະນາ ແລະ ຮຽນຮູ້.

ເພື່ອຊ່ວຍໃຫ້ເດັກເປັນຜູ້ມີສ່ວນຮ່ວມຢ່າງຫ້າວຫັນ ແລະ ປະສົບຜົນສຳເລັດໃນທົ່ວຫຼາຍໆສະຖານທີ່ ແລະ ສະຖານະການ, ຈະຊ່ວຍໃຫ້ເດັກມີການປັບປຸງທີ່ດີຂຶ້ນໃນດ້ານ:

- ທັກສະທາງດ້ານສັງຄົມ-ອາລົມ ແລະ ການພົວພັນທາງສັງຄົມໄປໃນທາງບວກ.
- ການຮຽນຮູ້ມາ ແລະ ການນຳໃຊ້ຄວາມຮູ້ ແລະ ທັກສະຕ່າງໆ ລວມທັງດ້ານພາສາ ແລະ ການສື່ສານ.
- ການນຳໃຊ້ພຶດຕິກຳທີ່ເໝາະສົມເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາ.



## Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA) ແມ່ນຫຍັງ?

ໃນປີ 1986 ລັດຖະສະພາ ໄດ້ປັບປຸງກົດໝາຍທີ່ປັດຈຸບັນຮຽກວ່າ Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA) ແລະ ໄດ້ສ້າງຕັ້ງໂຄງການໜຶ່ງຂຶ້ນມາ ເພື່ອຊຸກຍູ້ໃຫ້ລັດຕ່າງໆ ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນທົ່ວລັດ ສຳລັບເດັກໃນໄວໜຸ່ມທີ່ມີຄວາມພິການ ແລະ ຄອບຄົວຂອງເຂົາເຈົ້າ. ກົດໝາຍສະບັບດັ່ງກ່າວໄດ້ສ້າງມາດຕະຖານໃຫ້ບັນດາລັດຕ່າງໆປະຕິບັດຕາມໃນການໃຫ້ການບໍລິການໃຫ້ແກ່ບັນດາຄອບຄົວທີ່ມີເດັກທາລົກ ແລະ ເດັກໃນໄວແອບຍ່າງທີ່ມີຄວາມພິການ. ແຕ່ລະລັດຈະຕັດສິນໃຈໃນທຸກໆປີວ່າ ຕົນຈະສາມາດສືບຕໍ່ໃຫ້ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຕາມທີ່ໄດ້ກຳນົດໃນ IDEA ຫຼື ບໍ່. ໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT) ຂອງ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ, DCYF) ເປັນຜູ້ຊີ້ນຳການປະສານງານຂອງລະບົບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນທົ່ວລັດ.

ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ໄດ້ຮັບການອອກແບບມາເພື່ອຕອບສະໜອງຄວາມຕ້ອງການດ້ານການພັດທະນາການຂອງເດັກແຕ່ລະຄົນທີ່ເຂົ້າເງື່ອນໄຂ ແລະ ຄວາມຕ້ອງການຂອງຄອບຄົວກ່ຽວກັບການເສີມຂະຫຍາຍການພັດທະນາຂອງເດັກ.

ຖ້າທ່ານຕ້ອງການນາຍແປພາສາມື, ຈະຕ້ອງໄດ້ສະໜອງໃຫ້ແກ່ທ່ານ. ຖ້າທ່ານເວົ້າພາສາອັງກິດບໍ່ໄດ້, ຕ້ອງມີນາຍແປພາສາໃຫ້ແກ່ທ່ານ, ເວັ້ນເສຍແຕ່ຈະເຫັນໄດ້ຢ່າງຊັດເຈນວ່າ ມັນເປັນໄປບໍ່ໄດ້ທີ່ຈະເຮັດແນວນັ້ນໄດ້ເທົ່ານັ້ນ.

# ຈະເຮັດແນວໃດ ຖ້າຂ້າພະເຈົ້າມີຄຳຖາມກ່ຽວກັບການພັດທະນາການຂອງລູກຂອງຕົນ?

ໂທຫາ Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ໃນເຂດທ້ອງຖິ່ນຂອງທ່ານ. FRC ແມ່ນມີຢູ່ໃນແຕ່ລະຄາວຕີ້ ຫຼື ເຂດທີ່ຕັ້ງທາງພູມສາດ. ພວກເຂົາຈະຊ່ວຍໃຫ້ຄອບຄົວຂອງທ່ານໄດ້ຮັບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ທີ່ລູກຂອງທ່ານອາດຈະຕ້ອງການ. ເພື່ອຊອກຫາລາຍຊື່ຂອງຜູ້ນຳ FRC ໃນທ້ອງຖິ່ນຂອງທ່ານ, ໃຫ້ໂທຫາສາຍດ່ວນ Family Health Hotline (ສາຍດ່ວນສຳລັບສຸຂະພາບຄອບຄົວ) ທີ່ເບີ 1-800-322-2588. ນອກຈາກນັ້ນ, ທ່ານກໍຍັງສາມາດຈະໂທຫາພະແນກສາທາລະນະສຸກໃນທ້ອງຖິ່ນຂອງທ່ານ ຫຼື ເຂດການສຶກສາໄດ້ອີກດ້ວຍ.

ລົມກັບຜູ້ໃຫ້ບໍລິການສຸຂະພາບຂອງທ່ານກ່ຽວກັບຂໍ້ກັງວົນຂອງທ່ານ. ຜູ້ໃຫ້ບໍລິການຈະສາມາດໃຫ້ການກວດກັ່ນຕອງ ຫຼື ແນະນຳແຫຼ່ງຊັບພະຍາກອນອື່ນໄດ້. ຖ້າທ່ານບໍ່ມີທ່ານໝໍ ຫຼື ຕ້ອງການຂໍ້ມູນເພີ່ມຕື່ມ ຫຼື ຄວາມຊ່ວຍເຫຼືອ, ໃຫ້ໂທຫາເບີສາຍດ່ວນ Family Health Hotline (ສາຍດ່ວນສຳລັບສຸຂະພາບຄອບຄົວ) ຕາມທີ່ໄດ້ລະບຸໄວ້ຂ້າງເທິງ. ທ່ານບໍ່ຈຳເປັນຕ້ອງມີໃບນຳສົ່ງຈາກທ່ານໝໍ ເພື່ອເຂົ້າໄປຮັບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ. ທ່ານສາມາດຈະນຳສົ່ງດ້ວຍຕົນເອງໃນນາມເປັນພໍ່ແມ່ຜູ້ປົກຄອງ.

## ການກວດກັ່ນຕອງແມ່ນຫຍັງ?

ການກວດກັ່ນຕອງ ແມ່ນການກວດເບິ່ງແບບເລັ່ງລັດວ່າລູກຂອງທ່ານກຳລັງຮຽນຮູ້ ແລະ ຈະເລີນເຕີບໂຕຄືແນວໃດ. ການກວດກັ່ນຕອງແມ່ນຈະກວດໂດຍບຸກຄົນທີ່ໄດ້ຮັບການຝຶກອົບຮົມ ເພື່ອກຳນົດວ່າລູກຂອງທ່ານກຳລັງພັດທະນາການຄືແນວໃດ. ຖ້າການພັດທະນາການຂອງລູກຂອງທ່ານມີຄວາມໜ້າກັງວົນ, FRC ຂອງທ່ານຈະສາມາດໃຫ້ຂໍ້ມູນກ່ຽວກັບວິທີເຂົ້າຮັບການປະເມີນຕີລາຄາສຳລັບລູກຂອງທ່ານ.



## ການປະເມີນຕີລາຄາແມ່ນຫຍັງ?

ການປະເມີນຕີລາຄາຈະໃຫ້ຂໍ້ມູນແບບເລິກເຊິ່ງກ່ຽວກັບການພັດທະນາການຂອງລູກທ່ານ. ການປະເມີນຕີລາຄາແມ່ນຈະເຮັດຮ່ວມກັນກັບທ່ານ, ລູກຂອງທ່ານ ແລະ ຜູ້ຊ່ຽວຊານດ້ານການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ.

ການປະເມີນຕີລາຄາຈະເຈາະຈົງໃສ່ດ້ານຕ່າງໆໃນການພັດທະນາການເຫຼົ່ານີ້:

- ດ້ານສະຕິປັນຍາ – ຄວາມສາມາດໃນການຮຽນຮູ້ ແລະ ວິທີການຮຽນຮູ້ຂອງລູກຂອງທ່ານ
- ດ້ານຮ່າງກາຍ – ຄວາມສາມາດໃນການເຄື່ອນໄຫວ, ເບິ່ງ ແລະ ໄດ້ຍິນ
- ດ້ານການສື່ສານ – ຄວາມສາມາດໃນການເຂົ້າໃຈພາສາ ແລະ ສະແດງອອກເຖິງຄວາມຕ້ອງການ
- ດ້ານສັງຄົມ ຫຼື ອາລົມ – ຄວາມສາມາດໃນການພົວພັນກັບຜູ້ອື່ນ
- ທັກສະໃນການປັບຕົວ – ຄວາມສາມາດໃນການແຕ່ງຕົວ, ກິນອາຫານ ແລະ ເບິ່ງແຍງດູແລຕົນເອງ.

ການປະເມີນຕີລາຄາແມ່ນເປັນວິທີການໜຶ່ງໃນການເບິ່ງວ່າລູກຂອງທ່ານຈະມີເງື່ອນໄຂໄດ້ຮັບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ຫຼື ບໍ່. ການປະເມີນຕີລາຄາຈະເກີດຂຶ້ນ ກໍຕໍ່ເມື່ອໄດ້ຮັບການອະນຸຍາດເປັນລາຍລັກອັກສອນຈາກທ່ານເທົ່ານັ້ນ ແລະ ບໍ່ມີຄ່າໃຊ້ຈ່າຍໃດໆ.

## ຄຳແນະນຳກ່ຽວກັບການວາງແຜນສຳລັບການປະເມີນຕີລາຄາ:

- ຂໍຄວາມຊ່ວຍເຫຼືອຈາກຜູ້ປະສານງານດ້ານຊັບພະຍາກອນຄອບຄົວ (FRC) ຂອງທ່ານ.
- ນຳຄຳຖາມ ຫຼື ຄວາມກັງວົນທີ່ທ່ານອາດຈະມີກ່ຽວກັບການພັດທະນາການຂອງລູກຂອງທ່ານມາພິຈາລະນາ.
- ແບ່ງປັນຂໍ້ມູນທັງໝົດທີ່ທ່ານຄິດວ່າມີຄວາມສຳຄັນ ເຊັ່ນ: ບັນທຶກທາງການແພດ, ປຶ້ມຕິດຕາມເດັກ, ແຜນວາດການເຕີບໂຕ ຫຼື ລາຍງານອື່ນໆ.
- ຕັດສິນໃຈວ່າເວລາໃດ ຫຼື ສະຖານທີ່ໃດ ມີຄວາມເໝາະສົມສຳລັບທ່ານ ແລະ ຄອບຄົວຂອງທ່ານ.
- ເຊີນສະມາຊິກໃນຄອບຄົວ, ໝູ່ເພື່ອນ ຫຼື ບຸກຄົນໃຫ້ການສະໜັບສະໜູນອື່ນໆເຂົ້າຮ່ວມ ຖ້າທ່ານຕ້ອງການ.
- ແຈ້ງໃຫ້ FRC ຂອງທ່ານຊາບ ຖ້າທ່ານຕ້ອງການນາຍແປພາສາ ຫຼື ການຊ່ວຍເຫຼືອອື່ນໆ.

ຫຼັງຈາກການປະເມີນ, ທ່ານ ແລະ ສະມາຊິກຄົນອື່ນໆໃນທີມງານ ຈະສົນທະນາກ່ຽວກັບສິ່ງທີ່ລູກຂອງທ່ານກຳລັງເຮັດໄດ້ແລ້ວ ແລະ ກຳນົດສິ່ງທີ່ໜ້າກັງວົນຕ່າງໆ. ຖ້າມີດ້ານທີ່ຊັກຊ້າ, ລູກຂອງທ່ານອາດຈະມີເງື່ອນໄຂໄດ້ຮັບການບໍລິແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ. ທ່ານສາມາດເລືອກທີ່ຈະຮັບ ຫຼື ບໍ່ຮັບການບໍລິການເຫຼົ່ານີ້ໄດ້.

# ຜູ້ທີ່ມີສິດໄດ້ຮັບການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນ Washington ແມ່ນມີໃຜແດ່?

ເພື່ອໃຫ້ເຂົ້າກັບເງື່ອນໄຂ, ເດັກຈະຕ້ອງມີຄວາມຊັກຊ້າ 25 ເປີເຊັນ ຫຼື ມີຄ່າບ່ຽງເບນມາດຕະຖານ 1.5 ເທົ່າ ຕໍ່າກວ່າອາຍຸຂອງລາວຢູ່ໃນໜຶ່ງ ຫຼື ຫຼາຍດ້ານໃນການພັດທະນາການ. ນອກຈາກນັ້ນ, ເດັກກໍຍັງອາດຈະມີເງື່ອນໄຂ ຖ້າລາວມີສະພາບທາງດ້ານຮ່າງກາຍ ຫຼື ຈິດໃຈ ເຊັ່ນ: ໂຣກດາວຊິນໂດຣມ, ເຊິ່ງເປັນໂຣກທີ່ຮູ້ດີກັນວ່າເຮັດໃຫ້ການພັດທະນາການຊັກຊ້າ.

## ການປະເມີນຜົນແມ່ນຫຍັງ?

ການປະເມີນຜົນ ແມ່ນການເກັບກຳຂໍ້ມູນຈາກທ່ານ, ບຸກຄົນອື່ນທີ່ຮູ້ຈັກລູກຂອງທ່ານ ແລະ ຈາກຂະບວນການທີ່ບັນດາຜູ້ໃຫ້ບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນອາດຈະໃຊ້ ເພື່ອທຳຄວາມເຂົ້າໃຈພຶດຕິກຳ ແລະ ການພັດທະນາການຂອງລູກຂອງທ່ານ ໃນກິດຈະວັດປະຈຳວັນ ແລະ ກິດຈະກຳທົ່ວໄປ. ການປະເມີນຜົນ ຈະເບິ່ງໄປທີ່ວິທີການໃນການຮຽນຮູ້ທັກສະໃໝ່ໆ ຂອງລູກທ່ານ, ວິທີການພົວພັນກັບຄົນອື່ນຂອງລາວ ແລະ ສິ່ງທີ່ລາວມັກ ພ້ອມທັງສິ່ງທີ່ລາວເຫັນວ່າເຮັດໃຫ້ມີຄວາມອຸກອັ່ງ ຫຼື ເປັນສິ່ງທ້າທາຍ. ຂໍ້ມູນຈາກການປະເມີນຜົນ ຈະຊ່ວຍໃຫ້ທ່ານ ແລະ ທີມງານຂອງທ່ານຕັດສິນໃຈເຖິງຜົນໄດ້ຮັບ (ການປ່ຽນແປງ) ທີ່ທ່ານຕ້ອງໄດ້ດຳເນີນການ ແລະ ການບໍລິການ ແລະ ການຊ່ວຍເຫຼືອຕ່າງໆ ທີ່ສາມາດຊ່ວຍໃຫ້ບັນລຸຜົນໄດ້ຮັບເຫຼົ່ານັ້ນໄດ້.

ນອກຈາກນັ້ນ, ການປະເມີນຜົນກໍຍັງລວມເຖິງຂະບວນການຕໍ່ເນື່ອງ ທີ່ໃຊ້ເພື່ອກຳນົດຄວາມຄືບໜ້າຂອງລູກທ່ານ ໃນການບັນລຸຜົນໄດ້ຮັບ ແລະ ຮັບປະກັນໃຫ້ການບໍລິການ ແລະ ການຊ່ວຍເຫຼືອທີ່ທ່ານໄດ້ຮັບສາມາດຊ່ວຍໃຫ້ລູກຂອງທ່ານມີຄວາມກ້າວໜ້າ.



# ສິ່ງທີ່ຈະເກີດຂຶ້ນຕໍ່ໄປແມ່ນມີຫຍັງແດ່?

## Individualized Family Service Plan (ແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP)

ຖ້າເຂົ້າເງື່ອນໄຂ, ລູກຂອງທ່ານອາດຈະໄດ້ຮັບການບໍລິແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງ IDEA. ທ່ານຈະມີການປະຊຸມກັບ Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ແລະ ບັນດາຜູ້ໃຫ້ບໍລິການອື່ນໆ. ຄອບຄົວຂອງທ່ານ, ພ້ອມດ້ວຍຄົນອື່ນໆ, ຈະຂຽນແຜນການສະບັບໜຶ່ງຂຶ້ນມາ, ເອີ້ນວ່າ Individualized Family Service Plan (ແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP). ເຮັດວຽກກັບ FRC ຂອງທ່ານເພື່ອຮັບປະກັນໃຫ້ແຜນການດັ່ງກ່າວສະທ້ອນເຖິງຄວາມກັງວົນ, ຄວາມສົນໃຈ ແລະ ຄຸນຄ່າຂອງຄອບຄົວຂອງທ່ານ.

ການບໍລິການຕ່າງໆ ຈະເລີ່ມຕົ້ນເມື່ອທ່ານໄດ້ຕົກລົງເຫັນດີກັບແຜນ IFSP ແລະຍິນຍອມເຫັນດີຮັບການບໍລິການ.

ແຜນ IFSP ເປັນຂະບວນການຕໍ່ເນື່ອງ ທີ່ຕອບສະໜອງຄວາມຕ້ອງການທີ່ມີປ່ຽນແປງຂອງລູກ ແລະ ຄອບຄົວຂອງທ່ານ. ແຜນການນີ້ຈະຖືກທົບທວນຄືນຢ່າງໜ້ອຍທຸກໆຫົກເດືອນ ແລະ ຂຽນຄືນໃໝ່ໃນແຕ່ລະປີ.



ແຜນ IFSP ປະກອບມີ:

- **ລະດັບການເຮັດວຽກໃນປັດຈຸບັນ** – ສິ່ງທີ່ລູກຂອງທ່ານກຳລັງເຮັດໄດ້ຢູ່ໃນຂະນະນີ້.
- **ຄຳຖະແຫຼງຂອງຄອບຄົວ** – ຄຳຖະແຫຼງກ່ຽວກັບຄວາມກັງວົນຂອງຄອບຄົວ, ສິ່ງທີ່ເປັນບູລິມະສິດ ແລະແຫຼ່ງຊັບພະຍາກອນ; ຄຳຖະແຫຼງຂອງຄອບຄົວຂອງທ່ານເປັນສ່ວນໜຶ່ງທີ່ສຳຄັນຂອງແຜນ IFSP, ແຕ່ທ່ານສາມາດເລືອກທີ່ຈະບໍ່ມີຄຳຖະແຫຼງກໍໄດ້.
- **ຜົນໄດ້ຮັບ** – ການປ່ຽນແປງທີ່ທ່ານຕ້ອງການຢາກຈະເຫັນສຳລັບລູກ ແລະ ຄອບຄົວຂອງທ່ານ.
- **ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນທີ່ຕ້ອງການ** – ຄວາມຖີ່ ແລະ ໄລຍະເວລາ, ສະຖານທີ່ ທີ່ຈະໃຫ້ການບໍລິການ ແລະ ຜູ້ທີ່ຈະຈ່າຍຄ່າບໍລິການເຫຼົ່ານັ້ນ (ມີຫຼາກຫຼາຍແຫຼ່ງທີ່ແຕກຕ່າງກັນ ໃຫ້ທຶນແກ່ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ). ທ່ານສາມາດຈະຍອມຮັບ ຫຼື ປະຕິເສດການບໍລິການໃດໜຶ່ງ ທີ່ໄດ້ສະເໜີໃຫ້ທ່ານໄດ້ (ຍົກເວັ້ນ ການປະສານງານດ້ານຊັບພະຍາກອນຄອບຄົວ) ຖ້າທ່ານກຳລັງເຂົ້າຮ່ວມໃນໂຄງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ.
- **ສະພາບແວດລ້ອມແບບທຳມະຊາດ** – ຄຳຖະແຫຼງກ່ຽວກັບສະພາບແວດລ້ອມແບບທຳມະຊາດ ທີ່ຈະສະໜອງການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ. ບັນດາແຜນ IFSPs ຕ້ອງລະບຸເຫດຜົນເປັນລາຍລັກອັກສອນ ຖ້າຈະບໍ່ສາມາດໃຫ້ການບໍລິການໄດ້ຢູ່ໃນສະພາບແວດລ້ອມແບບທຳມະຊາດ.
- **ກຳນົດເວລາ** – ເວລາທີ່ການບໍລິການຕ່າງໆຈະເລີ່ມຕົ້ນຂຶ້ນ ແລະ ສິ້ນສຸດລົງ ແລະ ເວລາທີ່ທ່ານຈະເບິ່ງແຜນຂອງທ່ານອີກຄັ້ງ.
- **ການບໍລິການອື່ນໆທີ່ຕ້ອງການ ທີ່ບໍ່ໄດ້ຮັບທຶນພາຍໃຕ້ IDEA** – ຜູ້ທີ່ສາມາດຊ່ວຍທ່ານຊອກຫາການບໍລິການເຫຼົ່ານີ້ໄດ້.
- **Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC)** – ກຳນົດຊື່ໄວ້ຢູ່ໃນແຜນການຂອງທ່ານ.
- **ແຜນສຳລັບການປ່ຽນຜ່ານກ່ອນອາຍຸຄົບ 3 ປີ** – ການຊອກຫາ ແລະ ການວາງແຜນ ສຳລັບການບໍລິການຫຼັງຈາກລູກຂອງທ່ານມີອາຍຸຄົບ 3 ປີ.

ທ່ານອາດຈະຢາກເຊີນສະມາຊິກໃນຄອບຄົວ, ໝູ່ເພື່ອນ ຫຼື ບຸກຄົນໃຫ້ການສະໜັບສະໜູນອື່ນໆເຂົ້າຮ່ວມການປະຊຸມ. ໃຫ້ນຳຂໍ້ມູນທຸກຢ່າງກ່ຽວກັບລູກຂອງທ່ານ ທີ່ທ່ານຮູ້ສຶກວ່າມີຄວາມສຳຄັນມາພິຈາລະນາ.

# ສິ່ງທີ່ຈະເກີດຂຶ້ນໃນຕອນອາຍຸຄົບ 3 ປີ ແມ່ນມີຫຍັງແດ່?

ຢ່າງໜ້ອຍຫົກຫາເກົ້າເດືອນກ່ອນທີ່ລູກຂອງທ່ານຈະມີອາຍຸຄົບ 3 ປີ, Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ຈະຊ່ວຍທ່ານໃນການວາງແຜນການຍົກຍ້າຍໄປຢູ່ກັບຜູ້ໃຫ້ບໍລິການ ຫຼື ໜ່ວຍງານຕໍ່ໄປທີ່ໃຫ້ບໍລິການລູກຂອງທ່ານ. ການປ່ຽນຜ່ານນີ້ສາມາດປ່ຽນສະຖານທີ່ ແລະ ວິທີການໃນການໃຫ້ບໍລິການໄດ້. ໃນການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ, ການປ່ຽນແປງນີ້ແມ່ນເອີ້ນວ່າ: ການປ່ຽນຜ່ານ. IDEA ກຳນົດໃຫ້ຕ້ອງມີແຜນການເປັນລາຍລັກອັກສອນສຳລັບການປ່ຽນຜ່ານນີ້. ກອງປະຊຸມກ່ຽວກັບການວາງແຜນສຳລັບການປ່ຽນຜ່ານ ຕ້ອງໄດ້ຈັດຂຶ້ນຢ່າງໜ້ອຍ 90 ວັນ ກ່ອນທີ່ລູກຂອງທ່ານຈະມີອາຍຸຄົບ 3 ປີ. ແຜນສຳລັບການປ່ຽນຜ່ານຂອງທ່ານຈະລະບຸການສຶກສາພິເສດ ຫຼື ການບໍລິການໃນຊຸມຊົນທີ່ລູກຂອງທ່ານອາດຈະຕ້ອງການ.

FRC ຂອງທ່ານຈະຂໍໃຫ້ທ່ານເຊັນແບບຟອມໃຫ້ອະນຸຍາດ, ເພື່ອໃຫ້ສາມາດຕິດຕໍ່ກັບໜ່ວຍງານ ຫຼື ຜູ້ໃຫ້ບໍລິການຄົນຕໍ່ໄປໄດ້ ເພື່ອວາງແຜນສຳລັບການປ່ຽນຜ່ານ. ການປະຊຸມລະຫວ່າງທ່ານ, FRC, (ບັນດາ)ຜູ້ໃຫ້ບໍລິການ ແລະ ເຂດການສຶກສາໃນທ້ອງຖິ່ນຈະໄດ້ຈັດຂຶ້ນ.

ເຂດການສຶກສາຈະກຳນົດວ່າລູກຂອງທ່ານຈະມີເງື່ອນໄຂໄດ້ຮັບການບໍລິການການສຶກສາພິເສດກ່ອນໄວຮຽນ ຫຼື ບໍ່. ພວກເຂົາຈະປຶກສາຫາລືກ່ຽວກັບຜົນໄດ້ຮັບຈາກການທົດສອບຂອງເຂົາເຈົ້າກັບທ່ານ ແລະ ໃຫ້ຂໍ້ມູນກ່ຽວກັບສິດຂອງທ່ານໃຫ້ແກ່ທ່ານ. ຖ້າລູກຂອງທ່ານມີເງື່ອນໄຂ, ການບໍລິການຂອງພວກເຂົາ ແມ່ນຈະສະໜອງໃຫ້ຜ່ານໂຄງການການສຶກສາສະເພາະບຸກຄົນ (IEP).

FRC ຂອງທ່ານຈະຊ່ວຍທ່ານໃນການວາງແຜນການຍົກຍ້າຍໄປຍັງການບໍລິການທີ່ເປັນໄປໄດ້ອື່ນໆ ຖ້າລູກຂອງທ່ານບໍ່ມີເງື່ອນໄຂໄດ້ຮັບການບໍລິການການສຶກສາພິເສດກ່ອນໄວຮຽນ.

## ຄຳແນະນຳສຳລັບກອງປະຊຸມກ່ຽວກັບການປ່ຽນຜ່ານ:

- ລວບລວມຂໍ້ມູນກ່ຽວກັບການປ່ຽນແປງທີ່ສະເໜີໃຫ້ໄດ້ຫຼາຍເທົ່າທີ່ຈະເປັນໄປໄດ້.
- ຖາມກ່ຽວກັບຕົວເລືອກ ຫຼື ທາງເລືອກຂອງໂຄງການທີ່ເປັນໄປໄດ້.
- ຖາມເຖິງການຝຶກອົບຮົມ ແລະ ການຊ່ວຍເຫຼືອທີ່ໂຄງການໃໝ່ຈະມີໃຫ້ຄອບຄົວ.
- ໄປຢ້ຽມຢາມໂຄງການໃໝ່ ກ່ອນທີ່ຈະດຳເນີນການປ່ຽນແປງ.
- ຂໍເອກະສານເປັນລາຍລັກອັກສອນ ແລະ ສຶກສາເຖິງຂັ້ນຕອນການເຂົ້າ ແລະ ມີສ່ວນຮ່ວມໃນໂຄງການໃໝ່.
- ໃຫ້ຂໍ້ມູນກ່ຽວກັບລູກຂອງທ່ານໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້ແກ່ໂຄງການໃໝ່.



# ສິດຂອງຂ້າພະເຈົ້າພາຍໃຕ້ Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ IDEA) ແມ່ນມີຫຍັງແດ່?

*(ຄວາມຄຸ້ມຄອງຕາມລະບຽບການ)*

ກົດໝາຍສ່ວນໃຫຍ່ຈະປະກອບມີສິດສຳລັບພົນລະເມືອງ ແລະ IDEA ກໍບໍ່ແຕກຕ່າງກັນ. Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ຂອງທ່ານ ຈະໃຫ້ "Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA) ພາກ C ວ່າດ້ວຍ ຄວາມຄຸ້ມຄອງຕາມລະບຽບການ (ສິດຂອງຜູ້ປົກຄອງ)" ທີ່ຈະອະທິບາຍເຖິງສິດຂອງທ່ານ ໃຫ້ແກ່ທ່ານ.

## ຕົວຢ່າງຂອງສິດຂອງທ່ານພາຍໃຕ້ **IDEA** ແມ້ນປະກອບດ້ວຍສິດຂອງທ່ານທີ່ຈະ:

- ເປັນຜູ້ຕັດສິນໃຈຂັ້ນຕົ້ນ ແລະ ຂັ້ນສຸດທ້າຍສຳລັບລູກຂອງທ່ານ.
- ເຂົ້າເຖິງການບໍລິການຕ່າງໆ ເຊັ່ນ:
  - ການລະບຸຂໍ້ກັງວົນ/ການຄົ້ນຫາເດັກທີ່ມີຄວາມບົກຜ່ອງແຕ່ເບື້ອງຕົ້ນ
  - ການປະເມີນຕີລາຄາ ແລະ ການປະເມີນຜົນແບບຫຼາຍສາຂາວິຊາຢ່າງທ່ວງທັນເວລາ
  - ການກຳນົດເງື່ອນໄຂການໄດ້ຮັບຂອງລູກທ່ານ
  - ຜູ້ປະສານງານ/ການປະສານງານດ້ານຊັບພະຍາກອນຄອບຄົວ

## ຖ້າລູກຂອງທ່ານມີເງື່ອນໄຂ, ທ່ານມີສິດທີ່ຈະ:

- ໄດ້ຮັບ Individualized Family Service Plan (ແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP).
- ໄດ້ຮັບການປະສານງານດ້ານຊັບພະຍາກອນຄອບຄົວຢ່າງຕໍ່ເນື່ອງກັບ FRC, ຈົນຮອດວັນຄົບຮອບວັນເກີດທີສາມຂອງລູກທ່ານ.
- Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ຄົນໃໝ່.
- ໄດ້ຮັບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນກ່ຽວກັບການພັດທະນາການຂອງລູກທ່ານ.
- ຍອມຮັບ ຫຼື ປະຕິເສດການບໍລິການທີ່ລູກ ແລະ ຄອບຄົວຂອງທ່ານຈະໄດ້ຮັບຕາມທີ່ກຳນົດໄດ້ໂດຍຜ່ານຂະບວນການ IFSP.
- ປະຕິເສດການບໍລິການບາງຢ່າງທີ່ທີມງານ IFSP ແນະນຳໃຫ້ ແລະ ຍັງຄົງໄດ້ຮັບການບໍລິການອື່ນໆ (ຍົກເວັ້ນການບໍລິການ, FRC).
- ເຂົ້າຮ່ວມໃນທຸກກອງປະຊຸມ ກ່ຽວກັບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງລູກທ່ານ ແລະ ການປ່ຽນແປງໃນການໃຫ້ບໍລິການ.
- ຈັດການປະຊຸມຕາມເວລາ ແລະ ສະຖານທີ່ທີ່ຄອບຄົວຂອງທ່ານຕົກລົງເຫັນດີ.
- ໄດ້ຮັບແຈ້ງການຕ່າງໆ ແລະ ເອກະສານ IFSP ເປັນພາສາແມ່ຂອງທ່ານ ຫຼື ວິທີການໃນການຕິດຕໍ່ສື່ສານທີ່ໃຊ້ໃນເຮືອນຂອງທ່ານ.





## ນອກຈາກນັ້ນ, ທ່ານກໍຍັງໄດ້ຮັບຄວາມຄຸ້ມຄອງກ່ຽວກັບບັນທຶກຂອງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງລູກທ່ານອີກດ້ວຍ. ຄວາມຄຸ້ມຄອງເຫຼົ່ານີ້ປະກອບດ້ວຍສິດຂອງທ່ານທີ່ຈະ:

- ກວດເບິ່ງບັນທຶກ ແລະ ຮ້ອງຂໍການແກ້ໄຂບັນທຶກ.
- ຂໍສຳເນົາບັນທຶກ.
- ໄດ້ຮັບການແຈ້ງໃຫ້ຊາບກ່ຽວກັບປະເພດ ແລະ ສະຖານທີ່ເກັບກຳ, ເກັບຮັກສາ ຫຼື ນຳໃຊ້ບັນທຶກໃນໂຄງການ, ບຸກຄົນຢູ່ໃນໂຄງການທີ່ສາມາດເຂົ້າເຖິງບັນທຶກເຫຼົ່ານັ້ນ ແລະ ເວລາທີ່ພວກເຂົາຈະເບິ່ງບັນທຶກເຫຼົ່ານັ້ນ.
- ຂໍຂໍ້ມູນກ່ຽວກັບບຸກຄົນທີ່ໄດ້ເຫັນບັນທຶກ ຫຼື ສຳເນົາບັນທຶກ.
- ຄັດຄ້ານຂໍ້ມູນໃນບັນທຶກທີ່ທ່ານເຊື່ອວ່າບໍ່ຖືກຕ້ອງ ຫຼື ເຮັດໃຫ້ຄົນອື່ນເຂົ້າໃຈຜິດ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດຂອງລູກ ຫຼື ຄອບຄົວຂອງທ່ານ. ບັນທຶກຂອງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງລູກທ່ານ ປະກອບໄປດ້ວຍ:
  - ບົດລາຍງານການກວດກັ່ນຕອງ
  - ບົດລາຍງານການປະເມີນຕີລາຄາ
  - ຂໍ້ມູນໃນການປະເມີນຜົນ
  - ການກຳນົດການມີເງື່ອນໄຂໄດ້ຮັບ
  - ຂໍ້ມູນທັງໝົດທີ່ເປັນສ່ວນໜຶ່ງຂອງ IFSP

## ຂໍ້ມູນກ່ຽວກັບຄອບຄົວຂອງທ່ານແມ່ນຈະເປັນຄວາມລັບ. ທ່ານມີສິດທີ່ຈະ:

- ເກັບຮັກສາຄວາມລັບຂອງຂໍ້ມູນສ່ວນຕົວ ແລະ ຂໍ້ມູນທີ່ສາມາດລະບຸຕົວຕົນໄດ້ ເຊັ່ນ:
  - ຊື່ລູກຂອງທ່ານ, ຊື່ຂອງທ່ານເອງ ຫຼື ຊື່ຂອງສະມາຊິກຄອບຄົວຄົນອື່ນໆ.
  - ທີ່ຢູ່ຂອງລູກຂອງທ່ານ.
  - ຄຸນລັກສະນະສ່ວນບຸກຄົນຕ່າງໆ ຫຼື ຂໍ້ມູນອື່ນໆທີ່ຈະຊ່ວຍໃຫ້ສາມາດລະບຸຕົວຕົນລູກຂອງທ່ານໄດ້ຢ່າງແນ່ນອນແບບສົມເຫດສົມຜົນ.
- ຮ້ອງຂໍນະໂຍບາຍ ແລະ ຂັ້ນຕອນໃນທ້ອງຖິ່ນ ກ່ຽວກັບວິທີການປົກປ້ອງຄວາມລັບ.
- ໃຫ້ການຍິນຍອມແບບຮັບຊາບຂໍ້ມູນເປັນລາຍລັກອັກສອນ ສຳລັບການແລກປ່ຽນ ຫຼື ແບ່ງປັນຂໍ້ມູນ ຫຼື ບັນທຶກຕ່າງໆ.

ນອກເໜືອໄປຈາກສິດຂອງພໍ່ແມ່/ຄອບຄົວແລ້ວ, ເດັກກໍຍັງມີສິດທີ່ຈະໄດ້ຮັບພໍ່ແມ່ຕົວແທນອີກດ້ວຍ ຖ້າ:

- ບໍ່ສາມາດລະບຸພໍ່ແມ່ໄດ້.
- ຫຼັງຈາກຄວາມພະຍາຍາມທີ່ສົມເຫດສົມຜົນແລ້ວ, ແຕ່ຜູ້ໃຫ້ບໍລິການ/ໜ່ວຍງານສາທາລະນະ ບໍ່ສາມາດຊອກຫາທີ່ຢູ່ຂອງພໍ່ແມ່ໄດ້.
- ລູກເປັນເດັກອຸປະຖຳຂອງລັດ.



# ຈະເຮັດແນວໃດ ຖ້າຂ້າພະເຈົ້າບໍ່ເຫັນດີກັບການຕັດສິນໃຈ ກ່ຽວກັບການບໍລິການຂອງລູກ ຫຼື ຄອບຄົວຂອງຕົນ?

ກະລຸນາລົມກັບ Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC) ຂອງທ່ານກ່ຽວກັບບັນຫາດັ່ງກ່າວ. ຖ້າການລົມນັ້ນຊ່ວຍບໍ່ໄດ້ຜົນ ຫຼື ທ່ານບໍ່ສະບາຍໃຈ, ທ່ານອາດເລືອກໃຊ້ທາງເລືອກໃດໜຶ່ງ ຫຼື ທັງໝົດຕໍ່ໄປນີ້:

- **ການໄກ່ເກ່ຍ** – ການໄກ່ເກ່ຍ ຈະມີໃຫ້ທ່ານເພື່ອຊ່ວຍແກ້ໄຂຂໍ້ຂັດແຍ່ງໂດຍບໍ່ເສຍຄ່າ. ການໄກ່ເກ່ຍ ແມ່ນຈະສະເໜີໃຫ້ໃນຖານະເປັນທາງເລືອກແທນການໄຕ່ສວນທາງບໍລິຫານ ຢ່າງເປັນທາງການ. ການໄກ່ເກ່ຍ ແມ່ນຂະບວນການດ້ວຍຄວາມສະໝັກໃຈ.
- **ການບໍລິການສະໜັບສະໜູນ** – ເຫຼົ່ານີ້ແມ່ນໂຄງການທີ່ຈະໃຫ້ຂໍ້ມູນ ແລະ ຊ່ວຍທ່ານໃນການວາງແຜນຫາວິທີການແກ້ໄຂບັນຫາ. ໜຶ່ງໃນອົງການສະໜັບສະໜູນ ແມ່ນໄດ້ແກ່ PAVE (ເບິ່ງໜ້າ 11). FRC ຂອງທ່ານ ສາມາດໃຫ້ຂໍ້ມູນກ່ຽວກັບການບໍລິການສະໜັບສະໜູນໃນພື້ນທີ່ຂອງທ່ານ.
- **ການໄຕ່ສວນຕາມຂະບວນການຍຸຕິທຳ (ການດຳເນີນຄະດີ)** – ນີ້ແມ່ນການໄຕ່ສວນ ຫຼື ການດຳເນີນຄະດີຢ່າງເປັນທາງການໂດຍເຈົ້າໜ້າທີ່ໄຕ່ສວນທາງບໍລິຫານ. ການຮ້ອງຂໍການໄຕ່ສວນທາງບໍລິຫານ ຈະຕ້ອງເຮັດເປັນລາຍລັກອັກສອນ ແລະ ລະບຸຄຳຮ້ອງຮຽນໄວ້ດ້ວຍ. ສົ່ງຄຳຮ້ອງຂໍໄປຍັງທີ່ຢູ່ຂອງຜູ້ອຳນວຍການຂອງຜູ້ໃຫ້ບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ຫຼື ຜູ້ຮັບເໝົາໃຫ້ການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນທ້ອງຖິ່ນຂອງທ່ານ. FRC ຂອງທ່ານສາມາດບອກຊື່ ແລະ ທີ່ຢູ່ຂອງເຂົາເຈົ້າໄດ້ ຫຼື ທ່ານສາມາດສົ່ງອີເມວຫາ **esit@dcyf.wa.gov** ເພື່ອຂໍຄວາມຊ່ວຍເຫຼືອໄດ້.

ພໍ່ແມ່, ບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ສາມາດຍື່ນຄຳຮ້ອງທຸກທາງບໍລິຫານໄດ້ ຖ້າພວກເຂົາຄິດວ່າໜ່ວຍງານ ຫຼື ຜູ້ໃຫ້ບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ກຳລັງລະເມີດຂໍ້ກຳນົດຂອງກົດໝາຍ. ຄຳຮ້ອງທຸກຕ້ອງເຮັດເປັນລາຍລັກອັກສອນ, ລົງລາຍເຊັນ ແລະ ລະບຸຂໍ້ເທັດຈິງກ່ຽວກັບການຮ້ອງທຸກໄວ້ດ້ວຍ.

ສົ່ງຄຳຮ້ອງທຸກໄປຍັງທີ່:

**Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ) Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ)**
PO Box 40970
Olympia, WA 98504-0970

ຄຳຮ້ອງທຸກຈະໄດ້ຮັບການກວດສອບ ແລະ ຈະມີຄຳຕອບເປັນລາຍລັກອັກສອນໃຫ້ພາຍໃນ 60 ວັນ.



# ຂ້າພະເຈົ້າສາມາດໄປຂໍຄວາມຊ່ວຍເຫຼືອ ຫຼື ຂໍ້ມູນເພີ່ມຕື່ມໄດ້ຢູ່ໃສແດ່?

ບັນດາອົງການຈັດຕັ້ງ ແລະ ກຸ່ມຕ່າງໆຕໍ່ໄປນີ້ ສາມາດໃຫ້ຂໍ້ມູນເພີ່ມຕື່ມ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນໄດ້:

### Family Health Hotline (ເບີສາຍດ່ວນດ້ານສຸຂະພາບຄອບຄົວ)

1-800-322-2588

**www.withinreachwa.org**

ເບີສາຍດ່ວນນີ້ຈະຮັກສາຂໍ້ມູນໃນປັດຈຸບັນກ່ຽວກັບແຫຼ່ງຊັບພະຍາກອນໃນການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງລັດ ແລະ ເອກະຊົນ, ລວມທັງບັນດາ Family Resources Coordinators (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ, FRC). ນອກຈາກນັ້ນ, ກໍຍັງປະກອບມີຂໍ້ມູນກ່ຽວກັບພູມຄຸ້ມກັນ, ໂພຊະນາການ ແລະ ການບໍລິການດ້ານສຸຂະພາບສຳລັບເດັກອື່ນໆ ທີ່ມີຢູ່ໃນ Washington.

---

### Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ, DCYF) ໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ, ESIT)

ອີເມວ: **esit@dcyf.wa.gov**

**www.dcyf.wa.gov**

ຊີ້ນຳລະບົບການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໃນທົ່ວລັດຂອງ IDEA, ພາກ C.

---

### Parent to Parent

1-800-821-5927

**www.arcwa.org**

ແມ່ນເຄືອຂ່າຍຜູ້ປົກຄອງໃນທົ່ວລັດທີ່ໃຫ້ການຊ່ວຍເຫຼືອ ແລະ ຂໍ້ມູນທາງດ້ານອາລົມແກ່ຜູ້ປົກຄອງທີ່ມີລູກໄວໜຸ່ມນ້ອຍທີ່ມີຄວາມພິການ ຫຼື ມີການພັດທະນາການຊັກຊ້າ.

### Washington State Father's Network

425-747-4004 ຕໍ່ 218

**https://fathersnetwork.org**

ໃຫ້ການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອ ແລະ ແຫຼ່ງຊັບພະຍາກອນສຳລັບຜູ້ຊາຍໝົດທຸກຄົນ ແລະ ບັນດາຄອບຄົວທີ່ມີລູກທີ່ມີຄວາມຕ້ອງການພິເສດ.

---

### Washington PAVE (Partnerships for Action, Voices for Empowerment (ພັນທະມິດສຳລັບການດຳເນີນການ, ສຽງສຳລັບການສ້າງຄວາມເຂັ້ມແຂງ))

1-800-5PARENT

**wapave.org**

ສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານສຳລັບຜູ້ປົກຄອງໃນທົ່ວລັດ ທີ່ໃຫ້ການຊ່ວຍເຫຼືອແກ່ບັນດາຄອບຄົວທີ່ມີລູກພິການ, ໃນຊ່ວງອາຍຸຕັ້ງແຕ່ແລກເກີດຈົນເຖິງເປັນຜູ້ໃຫຍ່.



# ຂ້າພະເຈົ້າຈະສາມາດເຂົ້າໄປມີສ່ວນຮ່ວມຫຼາຍຂຶ້ນໄດ້ຄືແນວໃດ?

ທ່ານມີບົດບາດສຳຄັນໃນການວາງແຜນ ແລະ ການພັດທະນາໂຄງການ ແລະ ການບໍລິການຕ່າງໆ ສຳລັບລູກຂອງທ່ານ. ນອກຈາກນັ້ນ, ທ່ານກໍຍັງສາມາດເຂົ້າຮ່ວມໃນການວາງແຜນເຖິງວິທີການໃຫ້ບໍລິການຂອງຊຸມຊົນຂອງທ່ານໄດ້ອີກດ້ວຍ.

ການວາງແຜນນີ້ ແມ່ນເຮັດໄດ້ໃນລະດັບຄາວຕີ້ ໂດຍຜ່ານ County Interagency Coordinating Councils (ສະພາປະສານງານລະຫວ່າງຄາວຕີ້, CICC). ສະພາ CICC ແຕ່ລະແຫ່ງຈະຕ້ອງມີພໍ່ແມ່ຜູ້ປົກຄອງເປັນສະມາຊິກໃນສະພາ. ພໍ່ແມ່ຜູ້ປົກຄອງຈະຊ່ວຍຕັດສິນໃຈກ່ຽວກັບວິທີການໃຫ້ການບໍລິການທີ່ດີທີ່ສຸດ ຮ່ວມກັບສະມາຊິກຄົນອື່ນໆທັງໝົດ. ກອງປະຊຸມຂອງ CICC ແມ່ນເປີດເຜີຍຕໍ່ສາທາລະນະ.

ນອກຈາກນັ້ນ, ກໍຍັງມີ State Interagency Coordinating Council (ສະພາປະສານງານລະຫວ່າງລັດ, SICC) ອີກດ້ວຍ. ສະພາແຫ່ງນີ້ ກໍຕ້ອງມີຕົວແທນຈາກພໍ່ແມ່ຜູ້ປົກຄອງເຊັ່ນກັນ. ກອງປະຊຸມຂອງ SICC ແມ່ນເປີດເຜີຍຕໍ່ສາທາລະນະ. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບເວລາ ແລະ ສະຖານທີ່ຈັດກອງປະຊຸມ ໃຫ້ຕິດຕໍ່ Family Resources Coordinator (ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ,), ESIT ຫຼື ເຂົ້າເບິ່ງເວັບໄຊທີ່ **www.dcyf.wa.gov**.

ປຶ້ມເຫຼັ້ມນີ້ແມ່ນຂໍ້ສະຫຼຸບສັງລວມກ່ຽວກັບໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ) ແຫ່ງລັດ Washington. ສຳລັບລາຍລະອຽດຄົບຖ້ວນກ່ຽວກັບແຜນການທີ່ໄດ້ຮັບການອະນຸມັດຂອງ Washington ພາຍໃຕ້ IDEA ຫຼື ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບ CICC ຫຼື SICC ຂອງທ່ານ, ໃຫ້ຕິດຕໍ່ໂຄງການ Early Support for Infants and Toddlers (ໂຄງການຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ) ແຫ່ງລັດ Washington ໄດ້ທີ່ **esit@dcyf.wa.gov**.

**www.dcyf.wa.gov**



# ນັ້ນໝາຍຄວາມວ່າແນວໃດ? (ຄຳສັບ)

### ການໄກ່ສວນທາງບໍລິຫານ

ຂະບວນການຢ່າງເປັນທາງໂດຍມີບຸກຄົນທີ່ເປັນກາງ ໄດ້ແກ່ ເຈົ້າໜ້າທີ່ໄກ່ສວນ, ເຊິ່ງເປັນຜູ້ທີ່ຈະມາຮັບຟັງຂໍ້ມູນຫຼັກຖານ ແລະ ການໂຕ້ຖຽງຂອງພໍ່ແມ່/ຄອບຄົວ ແລະ ໜ່ວຍງານຕ່າງໆ ແລະ ຕັດສິນໃຈວ່າໃຜເປັນຄົນຖືກ ແລະ ໃຜຕ້ອງເຮັດຫຍັງ.

### ການປະເມີນຜົນ

ຂະບວນການຕໍ່ເນື່ອງທີ່ຜູ້ຊ່ຽວຊານທີ່ມີຄຸນວຸດທິນຳມາໃຊ້ຕະຫຼອດປະສົບການໃນການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນຂອງເດັກ ເພື່ອລະບຸຄວາມຕ້ອງການສະເພາະເຈາະຈົງຂອງລາວ; ແຫຼ່ງຊັບພະຍາກອນ, ສິ່ງທີ່ເປັນບູລິມະສິດ ແລະ ຂໍ້ກັງວົນຂອງຄອບຄົວກ່ຽວກັບການພັດທະນາການຂອງລາວ; ແລະ ລັກສະນະ ແລະ ຂອບເຂດຂອງການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນທີ່ຕ້ອງການເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການເຫຼົ່ານີ້.

### ອຸປະກອນເຕັກໂນໂລຊີອຳນວຍຄວາມສະດວກ

ລາຍການ, ຊິ້ນສ່ວນຂອງອຸປະກອນ ຫຼື ລະບົບຜະລິດຕະພັນ ທີ່ໃຊ້ເພື່ອເພີ່ມ, ຮັກສາ ຫຼື ປັບປຸງຄວາມສາມາດຂອງລູກທ່ານໃນການເຮັດສິ່ງຕ່າງໆ (ຕົວຢ່າງເຊັ່ນ: ກິນ, ສື່ສານ, ເຄື່ອນຍ້າຍ).

### ການບໍລິການເຕັກໂນໂລຊີອຳນວຍຄວາມສະດວກ

ການບໍລິການທີ່ໃຫ້ການຊ່ວຍເຫຼືອໂດຍກົງແກ່ເດັກພິການໃນການເລືອກ, ຮັບ ຫຼື ນຳໃຊ້ອຸປະກອນເຕັກໂນໂລຊີອຳນວຍຄວາມສະດວກ.

### ການຄົ້ນຫາເດັກທີ່ມີຄວາມບົກຜ່ອງ

ປະກອບດ້ວຍ ການລະບຸແຕ່ເບື້ອງຕົ້ນ, ການກວດກັ່ນຕອງ, ການນຳສົ່ງ ແລະ ການປະສານງານການບໍລິການໃນເບື້ອງຕົ້ນ.

### ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ

ຊຸດການບໍລິການທີ່ສະໜອງໃຫ້ໂດຍໜ່ວຍງານພາກລັດ ແລະ ເອກະຊົນ ແລະ ໄດ້ກຳນົດໄວ້ໂດຍກົດໝາຍ ເພື່ອຊ່ວຍເຫຼືອເດັກ ແລະ ຄອບຄົວທີ່ມີເງື່ອນໄຂໄດ້ຮັບ ໃນການເສີມຂະຫຍາຍທ່າແຮງໃນການເຕີບໃຫຍ່ ແລະ ການພັດທະນາການຂອງເດັກຕັ້ງແຕ່ເກີດຈົນຮອດອາຍຸ 3 ປີ.

### ການປະເມີນຕີລາຄາ

ຂະບວນການທີ່ຜູ້ຊ່ຽວຊານທີ່ມີຄຸນວຸດທິນຳມາໃຊ້ເພື່ອກຳນົດການມີເງື່ອນໄຂໄດ້ຮັບເບື້ອງຕົ້ນ ແລະ ຕໍ່ເນື່ອງຂອງເດັກ, ເຊິ່ງສຸມໃສ່ການກຳນົດສະຖານະຂອງເດັກທາລົກ ຫຼື ເດັກໃນໄວແອບຍ່າງໃນທຸກດ້ານຂອງການພັດທະນາການ ເຊັ່ນ: ດ້ານສະຕິປັນຍາ, ດ້ານສັງຄົມ/ອາລົມ, ດ້ານຮ່າງກາຍ (ລວມທັງສາຍຕາ ແລະ ຫູ), ດ້ານການສື່ສານ ແລະ ການປັບຕົວ.

### ການເບິ່ງແຍງດູແລແບບຖືເອົາຄອບຄົວເປັນໃຈກາງ

ຫຼັກການທີ່ສົ່ງເສີມໃຫ້ພໍ່ແມ່ຜູ້ປົກຄອງເປັນຜູ້ຕັດສິນໃຈ ແລະ ການສ້າງຄວາມຮ່ວມມືລະຫວ່າງພໍ່ແມ່ຜູ້ປົກຄອງ/ຜູ້ຊ່ຽວຊານ.

### ຄຳຖະແຫຼງຂອງຄອບຄົວ

ຄຳຖະແຫຼງທີ່ອອກໂດຍຄອບຄົວ ກ່ຽວກັບຄວາມກັງວົນ, ສິ່ງທີ່ເປັນບູລິມະສິດ ແລະ ແຫຼ່ງຊັບພະຍາກອນຂອງຄອບຄົວ ທີ່ລວມເຂົ້າໄວ້ຢູ່ໃນ Individualized Family Service Plan (ແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP).

### Individualized Family Service Plan (ແຜນການບໍລິການຄອບຄົວສະເພາະບຸກຄົນ, IFSP)

ແຜນການເປັນລາຍລັກອັກສອນ ສຳລັບການໃຫ້ການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ແລະ ການບໍລິການອື່ນໆໃຫ້ແກ່ບັນດາເດັກ ແລະ ຄອບຄົວທີ່ມີເງື່ອນໄຂໄດ້ຮັບ ທີ່: (1) ໄດ້ຮັບການສ້າງຂຶ້ນຮ່ວມກັນໂດຍຄອບຄົວ ແລະ ຜູ້ຊ່ຽວຊານທີ່ເໝາະສົມ; (2) ອີງໃສ່ການປະເມີນຕີລາຄາ ແລະ ການປະເມີນຜົນແບບຫຼາກຫຼາຍສາຂາວິຊາຕໍ່ເດັກ ແລະ ຄອບຄົວ; (3) ມີຄຳຖະແຫຼງທີ່ກຳກັບໂດຍຄອບຄົວກ່ຽວກັບແຫຼ່ງຊັບພະຍາກອນ, ສິ່ງທີ່ເປັນບູລິມະສິດ ແລະ ຄວາມກັງວົນຕ່າງໆ ຖ້າຫາກວ່າຄອບຄົວຕ້ອງການ; ແລະ (4) ລະບຸການບໍລິການຕ່າງໆທີ່ຈຳເປັນ ເພື່ອເສີມຂະຫຍາຍການພັດທະນາການຂອງເດັກ ແລະ ຄວາມອາດສາມາດຂອງຄອບຄົວເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການດ້ານການພັດທະນາການຂອງລາວ.

### ເດັກທາລົກ ແລະ ເດັກໃນໄວແອບຍ່າງທີ່ມີຄວາມພິການ

ເດັກຕັ້ງແຕ່ເກີດຫາອາຍຸ 3 ປີ ທີ່ມີເງື່ອນໄຂໄດ້ຮັບການບໍລິການການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ຍ້ອນພວກເຂົາປະສົບກັບຄວາມບ່ຽງເບນຈາກຄ່າມາດຕະຖານ 1.5 ເທົ່າ ຫຼື ມີການພັດທະນາການຊັກຊ້າຢ່າງໜ້ອຍ 25 ເປີເຊັນ ໃນໜຶ່ງ ຫຼື ຫຼາຍດ້ານຕໍ່ໄປນີ້ ຄື: ດ້ານສະຕິປັນຍາ, ດ້ານຮ່າງກາຍ, ດ້ານການສື່ສານ, ດ້ານສັງຄົມ/ອາລົມ ຫຼື ການປັບຕົວ; ຫຼື ມີອາການທາງດ້ານຮ່າງກາຍ ຫຼື ຈິດໃຈທີ່ຖືກວິນິດໄສວ່າມີຄວາມເປັນໄປໄດ້ສູງທີ່ຈະເຮັດໃຫ້ເກີດມີການພັດທະນາການຊັກຊ້າ.

### ການໄກ່ເກ່ຍ

ຂະບວນການທີ່ບໍ່ເປັນທາງການທີ່ມີບຸກຄົນທີ່ໄດ້ຮັບການຝຶກອົບຮົມ, ມີຄວາມເປັນກາງອາດຈະສາມາດຊ່ວຍໃຫ້ຄູ່ຂັດແຍ່ງແກ້ໄຂຄວາມເຫັນທີ່ແຕກຕ່າງກັນຂອງເຂົາເຈົ້າ ແລະ ຊອກຫາວິທີແກ້ໄຂທີ່ທຸກຝ່າຍເພິ່ງພໍໃຈ.

### ຫຼາກຫຼາຍສາຂາວິຊາ

ການນຳໃຊ້ສາຂາວິຊາ ຫຼື ວິຊາສະເພາະ ຕັ້ງແຕ່ສອງສາຂາຂຶ້ນໄປມາລວມກັນ ໃນການໃຫ້ການບໍລິການແບບປະສົມປະສານ ແລະ ປະສານງານກັນ ລວມທັງກິດຈະກຳການປະເມີນຕີລາຄາ ແລະ ການປະເມີນຜົນ ແລະ ການສ້າງແຜນ IFSP.

### ສະພາບແວດລ້ອມແບບທຳມະຊາດ

ສະຖານທີ່ຕ່າງໆ ທີ່ເປັນທຳມະຊາດ ຫຼື ເປັນປົກກະຕິ ສຳລັບເດັກທີ່ມີອາຍຸໃນໄວດຽວກັນທີ່ບໍ່ມີຄວາມພິການ. ສະພາບແວດລ້ອມນີ້ອາດຈະປະກອບດ້ວຍ ເຮືອນ, ເຂດໃກ້ເຮືອນ ຫຼື ຊຸມຊົນ.

### ຜົນໄດ້ຮັບ

ຄຳຖະແຫຼງກ່ຽວກັບການປ່ຽນແປງທີ່ທ່ານຕ້ອງການຢາກຈະເຫັນໃນຕົວລູກ ຫຼື ຄອບຄົວຂອງທ່ານ ອັນເປັນຜົນມາຈາກການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ. ຄຳຖະແຫຼງເຫຼົ່ານີ້ແມ່ນເປັນສ່ວນໜຶ່ງຂອງແຜນ IFSP ຂອງທ່ານ.

### ການກວດກັ່ນຕອງ

ລາຍການກວດກາ ຫຼື ແບບສຳຫຼວດແບບເລັ່ງລັດກ່ຽວກັບການພັດທະນາການຂອງລູກທ່ານ ເພື່ອເບິ່ງວ່າຕ້ອງໄດ້ມີການປະເມີນຕີລາຄາເພີ່ມຕື່ມຫຼື ບໍ່.

### ພໍ່ແມ່ຕົວແທນ

ບຸກຄົນທີ່ຖືກແຕ່ງຕັ້ງໂດຍໜ່ວຍງານໃນທ້ອງຖິ່ນ ຫຼື ລັດ ເພື່ອປະຕິບັດໜ້າທີ່ແທນພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍໃນການປົກປ້ອງສິດຂອງເດັກໃນຂະບວນການຕັດສິນໃຈ.

### ແຜນສຳລັບການປ່ຽນຜ່ານ

ແຜນທີ່ສ້າງຂຶ້ນສຳລັບລູກຂອງທ່ານ ເມື່ອອອກຈາກການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນໄວຕອນມີອາຍຸຄົບ 3 ປີ.

# ຄຳຂອບໃຈ

ຄະນະເຮັດວຽກໃຫ້ຄຳແນະນຳສຳລັບຄອບຄົວ, ເຊິ່ງເປັນຄະນະກຳມະການໜຶ່ງຂອງ State Interagency Coordinating Council (ສະພາປະສານງານລະຫວ່າງລັດ, SICC) ທີ່ໄດ້ສ້າງປຶ້ມຫົວນີ້ຂຶ້ນມາ.

ຈຸດປະສົງຂອງປຶ້ມຫົວນີ້ ແມ່ນເພື່ອຊ່ວຍໃຫ້ພໍ່ແມ່ຜູ້ປົກຄອງຂອງເດັກທາລົກ ແລະ ເດັກໃນໄວແອບຍ່າງທີ່ມີຄວາມພິການ ມີຄວາມເຂົ້າໃຈເຖິງການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນ ພາຍໃຕ້ Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ, IDEA).

ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງບັນດາສະມາຊິກໃນຄະນະກຳມະການທີ່ໄດ້ສະຫຼະເວລາຂອງຕົນໃນການສ້າງຄຳແນະນຳສະບັບນີ້ ເຊິ່ງໄດ້ແກ່:

**ທ່ານ Donna White, ປະທານ**

Department of Health, Maternal and Child Health (ພະແນກສາທາລະນະສຸກ, ສຸຂະພາບແມ່ ແລະ ເດັກ)

**ທ່ານ Catherine Davis**

Us–Qwed–Eeth, ເຜົ່າ Puyallup
ໂຄງການສຳລັບເດັກແລກເກີດເຖິງຫົກປີ

**ທ່ານ Heather Hebdon**

ໂຄງການ Specialized Training of Military Parents (ໂຄງການການຝຶກອົບຮົມພິເສດສຳລັບພໍ່ແມ່ທີ່ເປັນທະຫານ, STOMP)

**ທ່ານ Kathy Hormann**

ສູນພັດທະນາເດັກ, Sumner

**ທ່ານ Cassie Johnston**

Washington PAVE,
ຜູ້ປະສານງານການເຂົ້າຮ່ວມຂອງພໍ່ແມ່

**ທ່ານ Lynne Leeper**

Washington PAVE, ໂຄງການຝຶກອົບຮົມພໍ່ແມ່

**ທ່ານ Melanie Stafford**

Us–Qwed–Eeth, ເຜົ່າ Puyallup
ໂຄງການສຳລັບເດັກແລກເກີດເຖິງຫົກປີ

**ທ່ານ Kathy Blodgett, ວິຊາການ**

Department of Social and Health Services (ພະແນກບໍລິການສັງຄົມ ແລະ ສຸຂະພາບ), ແຕ່ກ່ອນແມ່ນໂຄງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ ແຫ່ງລັດ Washington

**ທ່ານ Barbie Faubion, ວິຊາການ**

Department of Social and Health Services (ພະແນກບໍລິການສັງຄົມ ແລະ ສຸຂະພາບ), ແຕ່ກ່ອນແມ່ນໂຄງການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນສຳລັບເດັກທາລົກ ແລະ ເດັກໃນໄວແອບຍ່າງ ແຫ່ງລັດ Washington

---

ພວກເຮົາຂໍສະແດງຄວາມຂອບໃຈມາຍັງບັນດາພໍ່ແມ່ຜູ້ປົກຄອງ ແລະ ຜູ້ຊ່ຽວຊານຄົນອື່ນໆ ທີ່ໄດ້ແບ່ງປັນຄວາມຄິດຕ່າງໆຂອງຕົນ ໄດ້ແກ່:

**ທ່ານ Rita Dickey, Linda Gil, Terri Larson, Kathy Lollar, Julie Martino, Kathie Moudy, Joni Strong, Diana Sandoval ແລະ Debbie Yanak.**

ພວກເຮົາຂໍສະແດງຄວາມຂອບໃຈເປັນພິເສດມາຍັງລັດ Maryland ແລະ Pennsylvania ທີ່ໄດ້ນຳປຶ້ມຄູ່ມືຂອງພວກເຂົາ ມາເປັນແມ່ແບບສຳລັບຄຳແນະນຳຂອງລັດ Washington.







*DCYF ບໍ່ມີການຈຳແນກ ແລະ ໃຫ້ໂອກາດທີ່ເທົ່າທຽມແກ່ທຸກຄົນ ໃນການເຂົ້າຫາໂຄງການ ແລະ ການບໍລິການຂອງຕົນ ໂດຍບໍ່ຄຳນຶງເຖິງເຊື້ອຊາດ, ສີຜິວ, ເພດ, ສາດສະໜາ, ຄວາມເຊື່ອ, ສະຖານະທາງຄອບຄົວ, ຊາດກຳເນີດ, ລົດສະນິຍົມທາງເພດ, ອາຍຸ, ສະຖານະນັກຮົບເກົ່າ ຫຼື ການມີຄວາມພິການທາງຮ່າງກາຍ, ທາງປະສາດສຳຜັດ ຫຼື ທາງຈິດໃຈ.*

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ໂດຍບໍ່ເສຍຄ່າໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຫ້ອງການປະຊາສຳພັນກັບຜູ້ມີສ່ວນຮ່ວມຂອງ DCYF) ທີ່ເບີ 1-800-723-4831 ຫຼື ສົ່ງອີເມວຫາ* ***communications@dcyf.wa.gov****.*

DCYF PUBLICATION FS_0002 | DEL 11-005 LA (07-2023) Laotian